ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສູນກາງສະຫະພັນແມ່ຍິງລາວ　　　　　　　　　　ເລກທີ ..534.. /ຫກ

ຫ້ອງການ　　　　　　　　　　ນະຄອນຫຼວງວຽງຈັນ, ວັນທີ ..03.. ພຶດສະພາ 2024

# ໜັງສືແຈ້ງເລື່ອນການປະມູນ

- ອີງຕາມ ຂໍ້ຕົກລົງ ຂອງປະທານຄະນະບໍລິຫານງານ ສູນກາງສະຫະພັນແມ່ຍິງລາວ ສະບັບເລກທີ 266/ສສຍລ, ລົງວັນທີ 02 ເມສາ 2024 ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບຈັດຊື້ເຄື່ອງຄອມພິວເຕີ ໃຫ້ສະຫະພັນແມ່ຍິງເມືອງ ໃນຂອບເຂດທົ່ວປະເທດ;
- ອີງຕາມ ແຈ້ງການເຊີນ ຂອງຫ້ອງການສູນກາງສະຫະພັນແມ່ຍິງລາວ ສະບັບເລກທີ 396/ຫກ, ລົງວັນທີ 03 ເມສາ 2024.

1. ຫ້ອງການ ສູນກາງສະຫະພັນແມ່ຍິງລາວ ໄດ້ຮັບງົບປະມານ ພາກ 66 ປີ 2024 ເພື່ອຈັດຊື້ຄອມພິວເຕີຕັ້ງໂຕະ (ເປັນຊຸດ) ແລະ ປິ່ນເຕີ ໃຫ້ສະຫະພັນແມ່ຍິງ 148 ເມືອງໃນຂອບເຂດທົ່ວປະເທດ, ບໍລິສັດທີ່ໄດ້ຮັບການປະມູນ ຈະຕ້ອງສະໜອງສິນຄ້າ ຄົບຕາມຈຳນວນ ທີ່ເຈົ້າຂອງໂຄງການ ຕ້ອງການ. ສ່ວນການຊຳລະແມ່ນຕາມງົບປະມານປະຈຳປີ. ສະນັ້ນ ຈຶ່ງຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄຸນວຸດທິເໝາະສົມ ເຂົ້າຮ່ວມການປະມູນຄັ້ງນີ້ດ້ວຍ. ກຳນົດເວລາໃນການ ມອບ-ຮັບ ສິນຄ້າແມ່ນ 30 ວັນ ພາຍຫລັງເຈົ້າຂອງໂຄງການອອກເອກະສານສັ່ງຊື້;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນຄັ້ງນີ້ ອະນຸຍາດໃຫ້ທຸກບໍລິສັດທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດທີ່ຖືກຕ້ອງຕາມກົດໝາຍທີ່ກ່ຽວພັນດຳເນີນທຸລະກິດທີ່ກ່ຽວກັບ ICT ຫຼື ຂ້າງຄຽງ;
4. ບໍລິສັດທີ່ຕ້ອງການເຂົ້າຮ່ວມການປະມູນ ສາມາດຊື້ເອກະສານການປະມູນຄົບຊຸດເປັນພາສາລາວໄດ້ທີ່ຫ້ອງການສູນກາງສະຫະພັນແມ່ຍິງລາວ ຕັ້ງຢູ່ບ້ານ ບຶງຂະຫຍອງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ, ເບີໂທ 020 22 22 23 79, 020 55 81 81 89 ໃນໂມງລັດຖະການ 08:00 – 16:00, ຊຶ່ງໄດ້ເລື່ອນແຈ້ງການປະມູນອອກໄປຈາກ ເວລາ 09:00 ໂມງ ຂອງ ວັນທີ 30 ເມສາ 2024 ເລື່ອນມາເປັນເວລາ 09:00 ໂມງ ຂອງ ວັນທີ 15 ພຶດສະພາ 2024. ສຳລັບ ເອກະສານປະມູນຍັງສືບຕໍ່ຂາຍໃຫ້ບັນດາບໍລິສັດທີ່ມີຄວາມສົນໃຈເຂົ້າປະມູນໄດ້ໃນລາຄາ 500.000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະ, ຊຳລະເປັນເງິນສົດ;

5. ຊອງປະມູນຕ້ອງສົ່ງກ່ອນ ເວລາ 09:00 ໂມງ ຂອງ ວັນທີ 15 ພຶດສະພາ 2024, ທີ່ ຫ້ອງປະຊຸມຊັ້ນ II ສໍານັກງານໃຫຍ່ ສູນກາງສະຫະພັນແມ່ຍິງລາວ, ຖະໜົນ ທ່າເດື່ອ, ບ້ານ ບຶງຂະຫຍອງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ໄດ້ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າ ຄະນະກໍາມະການປະມູນ ແລະ ຕົວແທນ ຂອງ ບໍລິສັດທີ່ເຂົ້າຮ່ວມການປະມູນ;
6. ທຸກໆຊອງປະມູນຕ້ອງມີເງິນຄໍ້າປະກັນການປະມູນດ້ວຍເງິນສົດ, ໜັງສືຄໍ້າປະກັນອອກໂດຍທະນາຄານ, ແຊັກ ( ວີຊາ ) ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ.

ຫົວໜ້າຫ້ອງການ

ສູນກາງສະຫະພັນແມ່ຍິງລາວ
ຫ້ອງການ

ນ. ສຸກພາພອນ ພານິດ